# ເອກະສານຊ້ອນທ້າຍ 3:

# ການແກ້ໄຂບັນຫາຂອງພາກທຸລະກິດ

# <u>ບົດສັງລວມບັນຫາທີ່ຕິດພັນກັບວຽກຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ</u>

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| 1 | **<u>ບັນຫາ ການສົ່ງອອກເຂົ້າກົມຢູ່ແຂວງສະຫວັນນະເຂດ.</u>**<br>ໃນການສົ່ງອອກເຂົ້າກົມຢູ່ແຂວງສະຫວັນນະເຂດ ມີຄວາມຫຍຸ້ງຍາກດັ່ງນີ້:ການຊອກຫາແນວພັນ, ການຜະລິດບໍ່ທັນລະດູການ ແລະ ມີບັນຫາດ້ານການເງິນ (ຄ່າຂົນສົ່ງທີ່ແພງ). ການຈັດສັນໂຮງສີຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນ ເປັນລະບົບ, ລະບົບສາງເກັບມ້ຽນເຂົ້າຍັງກະແຈກກະຈາຍ, ການຄ້າຊາຍແດນລະຫວ່າງ ລາວ - ໄທ ແລະ ລາວ - ຫວຽດນາມ ມີຄວາມຫຍຸ້ງຍາກໃນການຕໍ່ລອງ ເພາະຊາວກະສິກອນລາວຍັງບໍ່ມີທຶນຮອນພຽງພໍ ເຮັດໃຫ້ຕ້ອງອາໃສທຶນຮອນຈາກຜູ້ເກັບຊື້ ເຊັ່ນ: ແນວພັນ, ປຸ໋ຍ ແລະ ອື່ນໆ. ພ້ອມນັ້ນ, ໃນການຄ້າຊາຍແດນກັບຫວຽດນາມ ຍັງຖືກບັງຄັບໃຫ້ໃຊ້ບໍລິສັດຊິບປິ້ງທີ່ທາງບໍລິສັດຫວຽດນາມເລືອກ ເຊິ່ງມີລາຄາສູງ ແລະ ຄ່າຂົນສົ່ງທີ່ສູງ ສົ່ງຜົນໃຫ້ມີຄ່າໃຊ້ຈ່າຍສູງຂຶ້ນ. | - ຄ່າໃຊ້ຈ່າຍໃນການສົ່ງອອກສູງຂຶ້ນ (ຄ່າຂົນສົ່ງ). | ສະເໜີພາກລັດເອົາໃຈໃສ່ສົ່ງເສີມຕໍ່ການຜະລິດ ແລະ ສົ່ງອອກເຂົ້າເພື່ອໃຫ້ເປັນສິນຄ້າທ່າ ແຮງໃນການສົ່ງອອອກເພື່ອໃຫ້ສາມາດແຂ່ງ ຂັນກັບຕະຫຼາດພາກພື້ນ ແລະ ສາກົນ. | ກົມການນໍາເຂົ້າ ແລະ ສົ່ງອອກໄດ້ນໍາສະເໜີນະໂຍບາຍ ແລະ ນິຕິກໍາລວມຂອງການສົ່ງອອກເຂົ້າກົມ ເປັນຕົ້ນແມ່ນ ດາເລັດວ່າດ້ວຍການນໍາເຂົ້າ ແລະ ສົ່ງອອກສິນຄ້າ, ຂັ້ນຕອນການນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ຂໍ້ຕົກລົງ ວ່າດ້ວຍລະບຽບການຂໍອະນຸຍາດນາເຂົ້າ ແລະສົ່ງອອກເຂົ້າກົມ, ລັດຖະບັນຍັດ 03 ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການທີ່ກໍານົດລະອຽດຄ່າສິ້ນເປືອງຕ່າງໆ ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ພາກທຸລະກິດ. | ສະມາຄົມສົ່ງເສີມການຜະລິດ ແລະ ສົ່ງອອກເຂົ້າກົມ ມີຄວາມເຂົ້າໃຈຕໍ່ກັບຂັ້ນຕອນ ແລະ ລະບຽບການ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ. | ກົມການນໍາເຂົ້າ ແລະ ສົ່ງອອກ. | ຖືກແກ້ໄຂແລ້ວ. |
| 2 | **<u>ການແຈ້ງເອກະສານພາສີຢູ່ດ່ານນໍ້າເຫືອງ,ແຂວງໄຊຍະບູລີ.</u>** ໃນຊ່ວງໄລຍະຜ່ານມາ ຢູ່ແຂວງໄຊຍະບູລີ ໄດ້ມີບໍລິ ສັດນໍາເຂົ້າ - ສົ່ງອອກຈໍານວນໜຶ່ງ ໂດຍສະເພາະບໍລິສັດສົ່ງເສີມການຜະລິດກະສິ ກໍາເປັນສິນຄ້າເພື່ອສົ່ງອອກ ເຊັ່ນ: ສາລີ, ໝາກເດືອຍ ແລະ ອື່ນໆ, ໄດ້ດໍາເນີນການແຈ້ງເອກະ ສານພາສີດ້ວຍຕົນເອງ ແລະ ບາງຄັ້ງກໍ່ໄດ້ມີການນາໃຊ້ບໍລິການຂອງບໍລິສັດ shipping ໃນການຊ່ວຍຕື່ມຂໍ້ມູນແຈ້ງພາສີໂດຍຍັງສາມາດໃຊ້ກາຈໍ້າຂອງບໍລິສັດຕົນເອງ ປະທັບກາໃນໃບແຈ້ງພາສີໄດ້, ແຕ່ມາໃນໄລຍະທ້າຍເດືອນ 6 ຫາ ຕົ້ນເດືອນ 7 2014, ຂະແໜງພາສີປະຈາດ່ານນໍ້າເຫືອງ ໄດ້ແຈ້ງໃຫ້ບັນດາບໍລິສັດ ຊາບວ່າການດໍາເນີນການແຈ້ງ | - ບໍລິສັດເສຍຄວາມເປັນຕົວຕົນຂອງບໍລິສັດ ເນື່ອງຈາກຕ້ອງໄດ້ໃຊ້ກາຈໍ້າຂອງບໍລິສັດຮັບແຈ້ງເອກະສານພາສີ.<br>- ມີຄ່າໃຊ້ຈ່າຍເພີ່ມຂຶ້ນເນື່ອງຈາກຕ້ອງໄດ້ເສຍຄ່າບໍລິການໃຫ້ບໍລິສັດ shipping. | ສະເໜີອະນຸຍາດໃຫ້ນໍາໃຊ້ກາຈໍ້າຂອງບໍລິສັດຜູ້ ນໍາເຂົ້າ - ສົ່ງອອກ ໄດ້ຕາມປົກກະຕິ ໃນການດໍາເນີນການແຈ້ງເອກະສານພາສີ ເຖິງແມ້ວ່າຈະໃຊ້ບໍລິການຂອງບໍລິສັດນາຍໜ້າແຈ້ງເອກະສານກໍ່ຕາມ. | ໃນການດໍາເນີນການແຈ້ງເອກະສານພາສີ ເຖິງແມ້ວ່າຈະໃຊ້ບໍລິການຂອງບໍລິສັດນາຍໜ້າແຈ້ງເອກະສານ ເຈົ້າຂອງສິນຄ້າສາມາດນາໃຊ້ກາຈໍ້າຂອງບໍລິສັດຕົນໄດ້ຕາມປົກກະຕິ. ບັນຫາທີ່ເກີດຂຶ້ນແມ່ນ ເນື່ອງຈາກຄວາມເຂົ້າໃຈຜິດຂອງເຈົ້າໜ້າທີ່ພາສີປະຈໍາດ່ານ ຕໍ່ກັບການຜັນຂະຫຍາຍບົດແນະນໍາ ວ່າດ້ວຍການແຈ້ງພາສີເປັນລາຍລະ ອຽດ ດ້ວຍລະບົບບໍລິຫານຂໍ້ມູນດ້ານພາສີ ແບບອັດຕະໂນມັດ (ອາຊີກູດາ), ເລກທີ 10503/ກພສ, ລົງວັນທີ 05 ກໍລະກົດ 2012, ການດາເນີນການແຈ້ງເອກະສານພາສີ. | ແກ້ໄຂເປັນທີ່ຮຽບຮ້ອຍແລ້ວ. | - ພາສີ<br>- ກອງເລຂາ ອຄ | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | ເອກະສານພາສີ ແມ່ນຕ້ອງໄດ້ດຳເນີນການຜ່ານ ບໍລິສັດ shipping ແລະ ຕ້ອງໄດ້ນາໃຊ້ກາຈ້ຳຂອງ ບໍລິສັດ shipping ແທນການນາໃຊ້ກາຈ້ຳຂອງບໍລິສັດຜູ້ສົ່ງອອກ ຫຼື ນຳເຂົ້າສິນຄ້າເອງ. | | | | | | |
| 3 | <u>**ການປະຕິບັດແຈ້ງການແນະນຳ ເລກທີ 06068/ ກພສ ວ່າດ້ວຍການນຳເອົາວັດຖຸ, ສິນຄ້າ ເຄື່ອງຂອງ ສິ່ງຂອງເຂົ້າມາປຸງແຕ່ງ, ດັດແປງ ປະກອບເປັນ ຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ແລ້ວນຳ ອອກຄືນ ຂອງກົມພາສີ, ກະຊວງການເງິນ**</u><br>ໃນໄລຍະຜ່ານມາ, ການດຳເນີນການນຳເອົາວັດຖຸ, ສິນຄ້າ ເຄື່ອງຂອງສິ່ງຂອງເຂົ້າມາປຸງແຕ່ງ, ດັດ ແປງ ປະກອບເປັນຜະລິດຕະພັນສຳເລັດຮູບ, ເຄິ່ງ ສຳເລັດຮູບ ແລ້ວນຳອອກຄືນ ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດຕາມລະບອບ ການນຳເຂົ້າຊົ່ວຄາວ (ບໍ 50, ບໍ52...) ແລະ ເອກະສານປະກອບອື່ນໆທີ່ຈຳເປັນ ແລ້ວສະເໜີຕໍ່ ເຈົ້າໜ້າທີ່ພາສີປະຈຳດ່ານ. ທ້າຍເດືອນສິງຫາ 2014 ທີ່ຜ່ານມາ ກົມພາສີ, ກະຊວງການເງິນ ໄດ້ ອອກແຈ້ງການແນະນຳ ກ່ຽວກັບ ການນຳເອົາ ວັດຖຸ, ສິນຄ້າ ເຄື່ອງຂອງສິ່ງຂອງເຂົ້າມາປຸງແຕ່ງ, ດັດແປງ ປະກອບເປັນຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ແລ້ວນຳອອກຄືນ ສະບັບເລກທີ 06068/ກພສ ລົງວັນທີ 27 ສິງຫາ 2014 ເຊິ່ງໄດ້ ສ້າງຄວາມຫຍຸ້ງຍາກໃຫ້ແກ່ບາງຂະແໜງທຸລະ ກິດ. ສະນັ້ນ, ສຄອ ໃນນາມເປັນຕົວແທນໃຫ້ແກ່ ພາກທຸລະກິດໄດ້ສະເໜີບັນຫາໃຫ້ທາງພາກ ສ່ວນ ກ່ຽວຂ້ອງພິຈາລະນາ ຕໍ່ກັບ ຄວາມຫຍຸ້ງຍາກຂອງ ພາກທຸລະກິດ ໂດຍສະເພາະແມ່ນ ໂຮງງານອຸດສາ ຫະກຳທີມີການຜະລິດເພື່ອສົ່ງອອກ, ອຸດສາຫະກຳ ຕັດຫຍິບ ແລະ ອຸດສາຫະກຳປະກອບອື່ນໆ ເຊິ່ງ ໃນຂໍ້ທີ 01 ຂອງແຈ້ງການດັ່ງກ່າວໄດ້ລະບຸວ່າ: "ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະ ອຽດຕາມລະບອບການນຳເຂົ້າຊົ່ວຄາວ (ບໍ 50, ບໍ | -ບາງຂໍ້ກຳນົດໃນແຈ້ງການດັ່ງ ກ່າວຍັງມີລັກສະນະທີ່ບໍ່ສົ່ງເສີມ ການລົງທຶນ.<br>-ສ້າງຂໍ້ຫຍຸ້ງຍາກໃຫ້ແກ່ການນຳ ເຂົ້າວັດຖຸດິບທີ່ ສປປ ລາວ ຍັງ ບໍ່ສາມາດຜະລິດໄດ້ເອງ.<br>-ເຮັດໃຫ້ຕົ້ນທຶນການຜະລິດຍິ່ງ ສູງຂື້ນ ເຊິ່ງອາດສົ່ງຜົນໃຫ້ຜູ້ລົງ ທຶນຍ້າຍຖານການຜະລິດໄປປະ ເທດທີ່ມີເງື່ອນໄຂເອື້ອອຳນວຍ ກວ່າ ສປປ ລາວ.<br>-ຂາດເງິນທຶນໝູນວຽນໃນການ ດຳເນີນທຸລະກິດເພາະຈຳນວນ ເງິນທີ່ຕ້ອງໄດ້ວາງມັດຈຳແມ່ນ 120 % ຂອງມູນຄ່າສິນ ຄ້າ.<br>-ເມື່ອຕົ້ນທຶນການຜະລິດຍິ່ງສູງ ຂຶ້ນ,ອາດສົ່ງຜົນໃຫ້ຜູ້ລົງທຶນ ຍ້າຍຖານການຜະລິດໄປ ປະເທດທີ່ມີເງື່ອນໄຂເອື້ອ ອຳນວຍກວ່າ ສປປ ລາວ. | ສະເໜີກົມພາສີພິຈາລະນາແກ້ໄຂເລື່ອງ ຈຳນວນເງິນວາງມັດຈຳໃຫ້ມີຄວາມແທດເໝາະກັບການຈັດຕັ້ງປະຕິບັດຕົວຈິງ ແລະ ໃຫ້ ມີລັກສະນະສົ່ງເສີມການລົງທຶນ. | ກົມພາສີໄດ້ອອກ**ແຈ້ງການແນະນຳເພີ້ມຕື່ມ ເລກທີ 06410/ກພສ ລົງວັນທີ 10 ກັນຍາ 2014** ໃຫ້ເອົາໃຈໃສ່ໃນການຄຸ້ມຄອງ, ຕິດ ຕາມການນຳເອົາສິນຄ້າເຄື່ອງຂອງໃນລະ ບອບຄ້ຳປະກັນ ແລະ ງົດເກັບພາສີເພື່ອຮັບປະ ກັນໃນການສະສາງເອກະສານທີ່ນຳເຂົ້າໃນລະ ບອບຄ້ຳປະກັນ ແລະ ງົດເກັບພາສີ ໃຫ້ ຖືກຕ້ອງຕາມກຳນົດເວລາ ທີ່ກົດໝາຍພາສີ ກຳນົດໄວ້ ໄດ້ມີການແນະນຳເພີ້ມຕື່ມ ຕໍ່ກັບ ແຈ້ງການສະ ບັບເລກທີ 06068/ກພສ.<br>ກົມພາສີຈັດກອງປະຊຸມພົບປະເພື່ອໃຫ້ ຄວາມກະຈ່າງແຈ້ງ ກ່ຽວກັບ ການຈັດຕັ້ງປະຕິ ບັດແຈ້ງການດັ່ງກ່າວ. | ແກ້ໄຂເປັນທີ່ຮຽບຮ້ອຍແລ້ວ. | ກົມພາສີ.<br>ກອງເລຂາ ອຄ. | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | 52...) ຕ້ອງມີແຜນນຳເຂົ້າ ຫຼື ສູດການຜະລິດ ທີ່ໄດ້ຮັບອະນຸຍາດຈາກຂະແໜງກ່ຽວຂ້ອງ ສະເໜີຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ແລະ <u>**ເຮັດບົດບັນທຶກຄ້ຳປະກັນດ້ວຍເງິນສົດ 120% (ຮ້ອຍຊາວເປີເຊັນ)**</u> ຫຼື ໜັງສືຄ້ຳປະກັນຈາກສະຖາບັນການເງິນ, ທະນາຄານ ຕາມມາດຕາ 27 ຂອງກົດ ໝາຍວ່າດ້ວຍພາສີ". | | | | | | |
| 4 | <u>**ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ແລະ ການຜະລິດຖ່ານຂາດ.**</u><br>➢ <u>**ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ:**</u><br>1. ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ຍັງມີຫຼາຍຂັ້ນຂອດ,<br>2. ເອກະສານປະກອບເພື່ອຂໍອະນຸຍາດສົ່ງອອກແມ່ນມີຫຼາຍ ເກີນຄວາມຈຳເປັນ.<br>3. ການຈັດຕັ້ງປະຕິບັດນິຕິກຳທີ່ພາກລັດວາງອອກສ້າງຄວາມຫຍຸ້ງຍາກໃຫ້ແກ່ພາກທຸລະກິດ ເປັນຕົ້ນນິຕິກຳທີ່ກຳນົດຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ ເພື່ອສົ່ງອອກ, ຕົວ ຢ່າງ: ນິຕິກຳ ສະບັບເລກທີ 1415/ອຄ.ກອກ, ລົງວັນທີ 28/08/2008 ທີ່ກຳນົດຂະໜາດຜະລິດ ຕະພັນເຮັດໃຫ້ບໍ່ສາມາດສົ່ງອອກໄດ້ .<br>4. ຜະລິດຕະພັນໄມ້ທີ່ນຳໄປວາງສະແດງຢູ່ສູນການຄ້າຕ່າງໆ ຂອງ ສປປ ລາວ ບໍ່ສາມາດດຳເນີນເອກະ ສານການສົ່ງອອກກັບທີ່ ແລະ ແຈ້ງເອກະສານພາສີໄດ້ເລີຍ ໃນເວລາທີ່ລູກຄ້າຕ່າງປະເທດຕ້ອງການຊື້.<br>5. ການລົງກວດກາຜະລິດຕະພັນໄມ້ສຳເລັດຮູບກ່ອນສົ່ງອອກ ແມ່ນມີຫຼາຍຂະແໜງການລົງກວດກາພໍໃຜພໍລາວ ເຮັດໃຫ້ເພີ່ມຈຳນວນຄັ້ງໃນການກວດກາ, ເສຍເວລາ ແລະ ເພີ່ມຄ່າສິ້ນເປືອງ.<br>➢ <u>**ການຜະລິດຖ່ານຂາວ:**</u> | - <u>**ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ:**</u><br>- ເສຍເວລາໃນການດຳເນີນເອກະສານ 10 – 15 ມື້;<br>- ບໍ່ສາມາດສົ່ງອອກຜະລິດຕະພັນໄດ້ຕາມຄວາມຕ້ອງການຂອງລູກຄ້າ ເນື່ອງຈາກຕ້ອງປະຕິບັດຕາມນິຕິກຳເລກທີ 1415/ອຄ.ກອກ ທີ່ການົດຂະໜາດຜະລິດຕະພັນ.<br>- ຄ່າໃຊ້ຈ່າຍ, ຄ່າສິ້ນເປືອງໃນການດຳເນີນຂັ້ນຕອນທີ່ຊ້ຳໄປຊ້ຳມາ.<br>- <u>**ການຜະລິດຖ່ານຂາວ:**</u><br>- ເສຍເວລາ ແລະ ຄ່າໃຊ້ຈ່າຍໃນການດຳເນີນເອກະສານ.<br>- ເກີດຊ່ອງຫວ່າງໃຫ້ແກ່ພະນັກງານລັດສວຍໂອກາດກັບຜູ້ປະກອບການ ຜູ້ທີ່ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍແລ້ວ. | ➢ <u>**ການສົ່ງອອກຜະລິດຕະພັນໄມ້:**</u><br>1) ສະເໜີໃຫ້ຫຼຸດຜ່ອນຂັ້ນຂອດໃນການຂໍອະນຸຍາດສົ່ງອອກ;<br>2) ສະເໜີໃຫ້ປັບປຸງຄືນ ກ່ຽວກັບ ການກຳນົດຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ເພື່ອສົ່ງອອກ;<br>3) ສະເໜີໃຫ້ປັບປຸງຄືນ ຂັ້ນຕອນການສົ່ງອອກຜະລິດຕະພັນໄມ້ທີ່ນຳໄປວາງສະແດງຢູ່ສູນການຄ້າຕ່າງໆ ໃນ ສປປ ລາວ ເພື່ອໃຫ້ສາມາດດຳເນີນເອກະ ສານກັບທີ່ ແລະ ແຈ້ງພາສີ ແລ້ວສົ່ງອອກໄດ້ເລີຍ;<br>4) ສະເໜີໃຫ້ພາກລັດຫຼຸດຜ່ອນການລົງກວດກາຜະລິດຕະພັນໄມ້ສຳເລັດຮູບກ່ອນສົ່ງອອກ.<br>➢ <u>**ການຜະລິດຖ່ານຂາວ:**</u><br>⇨ **ສະເໜີຕໍ່ ກະຊວງກະສິກຳ ແລະ ປ່າໄມ້:**<br>1) ອອກແຈ້ງການສະເພາະ ກ່ຽວກັບ ຄ່າພັນທະຊັບພະຍາກອນ ແລະ ຄ່າພັນທະປູກໄມ້ທົດແທນສຳລັບຟືນໄມ້ຕິ້ວ ເພື່ອເຮັດໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ;<br>2) ພິຈາລະນາອອກອະນຸຍາດຂຸດຄົ້ນໄມ້ຕິ້ວ (ຕາມໂກ້ຕາທີ່ລັດຖະບານອະນຸມັດ) ເປັນ 01 ປີໃນຄັ້ງດຽວໂລດ ເພື່ອໃຫ້ສອດຄ່ອງຕາມຄຳສັ່ງເລກທີ 17/ນຍ ແລະ ບໍ່ເຮັດໃຫ້ | ⇨ <u>**ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ:**</u><br>1) ບັນຫາການປັບປຸງຂັ້ນຕອນການສົ່ງອອກຜະລິດຕະພັນໄມ້ສຳລັດຮູບທົ່ວໄປ ຫຼື ທີ່ເປັນຈຳນວນຫຼາຍ ແມ່ນລໍຖ້າການປັບປຸງ ຄຳສັ່ງຂອງນາຍົກ ລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ 22 ກັນຍາ 2008 ແລະ ຂໍ້ຕົກລົງຂອງນາຍົກລັດ ຖະມົນຕີ ເລກທີ 32/ນຍ, ລົງວັນທີ 06 ມີນາ 2012.<br>2) ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບທີ່ນຳໄປວາງສະແດງຢູ່ສູນການຄ້າຕ່າງໆ ໃນ ສປປ ລາວ ຫຼື ຕາມຫ້າງຮ້ານທີ່ມີຈຳນວນບໍ່ຫຼາຍແມ່ນເຫັນວ່າຕ້ອງມີຂັ້ນຕອນທີ່ກະທັດຮັດ ແລະ ງ່າຍດາຍ ເພື່ອໃຫ້ສາມາດດຳເນີນເອກະສານກັບທີ່ແລ້ວສົ່ງອອກໄດ້ເລີຍ ໂດຍໃຫ້ມີເງື່ອນໄຂດັ່ງນີ້: 1.) ຄະນະກຳມະການຈັດງານວາງສະແດງຢັ້ງຢືນ; 2. ມີໃບບິນອາກອນ.<br>3) ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ສ້າງເປັນນິຕິກຳໃດໜຶ່ງຂຶ້ນມາສະເພາະ ຊຶ່ງລາຍລະ ອຽດມອບໃຫ້ ກົມ ຂອ ເປັນເຈົ້າການປະສານກັບກະຊວງການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຮ່ວມກັນຮ່າງລະບຽບການ ຫຼື ບົດແນະນຳ ເຊັ່ນ: ການົດຈຳນວນປະລິມານຂອງຜະລິດຕະພັນໄມ້ທີ່ສາມາດສົ່ງອອກໄດ້ເລີຍໃນງານວາງສະແດງສິນຄ້າ. | ➢ <u>**ສົ່ງອອກໄມ້ສຳເລັດຮູບ**</u><br>- ໄດ້ມີການປະຊຸມຂັ້ນວິຊາການເປັນທີ່ຮຽບຮ້ອຍແລ້ວ ແລະ ໄດ້ລາຍງານຜົນການປະຊຸມ ແລະ ບັນດາຄຳເຫັນຕ່າງໆໄປໃຫ້ແກ່ ລມຕ ກະຊວງກະສິກຳ ແລະ ປ່າໄມ້ເປັນທີ່ຮຽບຮ້ອຍແລ້ວ. ແຕ່ໄດ້ຮັບຄຳຕອບວ່າ: ການປັບປຸງຕ່າງໆຈະມີລັກສະນະແຕ່ເທິງລົງລຸ່ມ. ດັ່ງນັ້ນ, ປະຈຸບັນນີ້ ແມ່ນຕ້ອງລໍຖ້າວ່າຂັ້ນເທິງເພິ່ນປະຈະມີຄຳເຫັນແນວໃດ.<br>- 03/12/2014: ສາເລັດຮ່າງແຈ້ງການແນະນຳເພີ່ມເຕີມ ກ່ຽວກັບການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ນາໄປວາງສະແດງຢູ່ງານວາງສະແດງ ຫຼື ຂາຍເຄື່ອງເຟີນີເຈີຂະໜາດຍ່ອຍທົ່ວໄປ; ສືບຕໍ່ຂໍທິດຈາກທ່ານຫົວໜ້າກົມ; ນາສະເໜີໃຫ້ຂະແໜງການກ່ຽວຂ້ອງມີຄຳເຫັນ.<br>➢ <u>**ການຜະລິດຖ່ານຂາວ:**</u><br>- ອີງຕາມການກວດກາເບິ່ງຈຳນວນບໍລິສັດທີ່ຂຶ້ນທະບຽນ ເຫັນວ່າມີຈຳນວນໜ້ອຍ ແລະ ເຫັນວ່າບັນຫາແມ່ນເກີດຂຶ້ນຍ້ອນກຸ່ມທີ່ | 1. ກະຊວງອຸດສາຫະກຳ ແລະ ການຄ້າ (ກົມນຳເຂົ້າ ແລະ ສົ່ງອອກ; ກົມອຸດສາຫະກຳ).<br>2. ພະແນກກະສິກຳ ນະຄອນຫຼວງ;<br>3.ກົມສົ່ງລວມເສດຖະກິດ<br>4. ຫ້ອງການຄຸ້ມຄອງຊັບສິນ;<br>5. ກົມຄຸ້ມຄອງຊັບສິນຂອງລັດ.<br>6. ກົມສ່ວຍສາອາກອນ. | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ<br>ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | ⇨ **ຂໍ້ຫຍຸ້ງຍາກທີ່ຕິດພັນກັບກະຊວງກະສິກຳ ແລະ ປ່າໄມ້:**<br>1) ການຈັດຕັ້ງປະຕິບັດການເສຍຄ່າພັນທະຊັບພະຍາ ກອນ ແລະ ຄ່າພັນທະປູກໄມ້ທົດແທນຄືນສຳລັບຟືນໄມ້ຕິ້ວທີ່ປະຊາຊົນຕັດເອົາຢູ່ດິນຄຸ້ມຄອງຂອງເຂົາເຈົ້າເອງ ແລະ ຟືນໄມ້ຕິ້ວທີ່ຕັດເອົາຢູ່ປ່າທົ່ວໄປ ບໍ່ມີຄວາມເປັນເອກະພາບ,ມີບາງແຂວງແມ່ນໄດ້ປະຕິບັດລະບຽບການຂອງຂະແໜງຊັບສິນຂອງລັດ ແລະ ມີບາງແຂວງປະຕິບັດຕາມຂະ ແໜງກະສິກຳ ແລະ ປ່າໄມ້;<br>2) ການອະນຸຍາດຕັດ ແລະ ເຄື່ອນຍ້າຍໄມ້ຕິ້ວ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ນະ ຄອນຫຼວງ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອະນຸມັດໃຫ້ແກ່ກຸ່ມບໍລິສັດແລ້ວນັ້ນ, ຢູ່ບາງແຂວງກໍ່ຍັງບໍ່ທັນປະຕິບັດຕາມ ຄຳສັ່ງສະບັບເລກທີ 17/ນຍ, ໝາຍຄວາມວ່າ ບໍ່ອະນຸຍາດໃຫ້ເປັນໜຶ່ງປີໃນຄັ້ງດຽວເລີຍ ໂດຍບາງແຂວງອອກໃຫ້ເປັນ 03 ເດືອນ ຫຼື 06 ເດືອນ ຫຼື ກຳນົດຮອດວັນທີ 30 ພຶດສະພາ ອີງຕາມກົດໝາຍວ່າດ້ວຍປ່າໄມ້ເທົ່ານັ້ນ, ຍັງສ້າງເງື່ອນໄຂໃຫ້ບໍລິສັດໄປຂໍຕໍ່ອະນຸຍາດ ຊຶ່ງຈະຕ້ອງເສຍເວລາ ແລະ ເງິນຄຳກ່ອນຈະໄດ້ຕໍ່ອະນຸຍາດດັ່ງກ່າວ.<br>3) ສຳລັບຟືນໄມ້ຕິ້ວບໍ່ຈຳເປັນຕ້ອງມີອະນຸຍາດຂຸດຄົ້ນ ເນື່ອງຈາກເປັນການເພີ່ມຂັ້ນຂອດຫຍຸ້ງຍາກໃຫ້ແກ່ການດຳເນີນທຸລະກິດ.<br>4) ການຈັດຕັ້ງປະຕິບັດນິຕິກຳຢູ່ບັນດາແຂວງຕ່າງໆຍັງບໍ່ທັນມີຄວາມເປັນເອກະພາບກັນ,ຊຶ່ງເຮັດໃຫ້ເກີດຊ່ອງຫວ່າງໃຫ້ແກ່ພະນັກງານລັດ ສວຍໂອກາດກັບຜູ້ປະກອບການ ຜູ້ທີ່ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍແລ້ວ. | | ຫົວໜ່ວຍທຸລະກິດຕ້ອງເສຍເວລາ-ຄ່າໃຊ້ຈ່າຍໃນການຂໍຕໍ່ອະນຸຍາດຫຼາຍຄັ້ງ;<br>3) ພິຈາລະນາຄືນສຳລັບຟືນໄມ້ຕິ້ວເຫັນວ່າບໍ່ຈຳເປັນຕ້ອງມີອະນຸຍາດຂຸດຄົ້ນ.<br>4) ກວດກາຄືນການຈັດຕັ້ງປະຕິບັດມະຕິຄຳສັ່ງ ຫຼື ແຈ້ງການຕ່າງໆຂອງກະຊວງວາງອອກ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.<br>⇨ **ຂໍ້ສະເໜີຕໍ່ ກະຊວງ ອຄ:**<br>1) ການອອກທະບຽນວິສາຫະກິດໃຫ້ສ້າງໂຮງ ງານຜະລິດຖ່ານຂາວຂໍໃຫ້ມີການປະສານງານກັບຂະແໜງປ່າໄມ້ເພື່ອຈະໄດ້ເບິ່ງຄວາມສາມາດສະໜອງວັດຖຸດິບ ແລະ ສະ ຖານທີ່ຕັ້ງໂຮງງານ ຢ່າງເໝາະສົມ;<br>2) ພິຈາລະນາຄືນການກວດກາສິ້ນເຂົ້າ-ສິ້ນອອກຂອງວັດຖຸດິບທີ່ຂະແໜງ ອຄ ຮັບຜິດຊອບຖ້າເປັນໄປໄດ້ແມ່ນໃຫ້ຕັດອອກເລີຍ;<br>3) ກວດຄືນການຈັດຕັ້ງປະຕິບັດຂັ້ນຕອນເຮັດສັນຍາຊື້-ຂາຍວັດຖຸດິບ ລະຫວ່າງໂຮງງານ ແລະ ພະແນກ ອຄ ແຂວງ ເພື່ອໃຫ້ມີຄວາມສອດຄ່ອງ ແລະ ຈະແຈ້ງຂຶ້ນ. | ⇨ **<u>ການຜະລິດຖ່ານຂາວ</u>:**<br>1) ໃຫ້ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດປະສານໄປຍັງບັນດາແຂວງຕາມສາຍຂອງຕົນ ເພື່ອກວດກາບັນດາຫົວໜ່ວຍທຸກິດຜະລິດຖ່ານຂາວ ວ່າມີການຂຶ້ນທະບຽນ ແລະ ມີການເຄື່ອນໄຫວດຳເນີນທຸລະກິດຖືກຕ້ອງຕາມລະບຽບຫຼັກການແລ້ວ ຫຼື ບໍ ເປັນຕົ້ນບັນດາຫົວໜ່ວຍທຸລະກິດທີ່ຕ່າງ ປະເທດມາລົງທຶນໂດຍຂຶ້ນທະບຽນອອກຊື່ເປັນຄົນລາວ ແລະ ການນຳໃຊ້ແຮງງານຕ່າງປະເທດຢູ່ໃນໂຮງງານ. ພ້ອມກັນນັ້ນ, ໃຫ້ປະສານກັບຂະແໜງກະສິກຳ ແລະ ປ່າໄມ້ ກ່ຽວກັບ ການອອກທະບຽນວິສາຫະກິດໃຫ້ແກ່ບັນດາໂຮງງານ ເພື່ອຮັບປະກັນການຕອບສະໜອງດ້ານວັດຖຸດິບ.<br>2) ສະເໜີໃຫ້ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ກວດກາເບິ່ງຄືນການແບ່ງໂກ້ຕາຂຸດຄົ້ນວັດຖຸດິບໃຫ້ບັນດາໂຮງງານ. ພ້ອມນັ້ນ, ຊ່ວຍປະສານໄປຍັງບັນດາແຂວງຕາມສາຍຂອງຕົນ ກ່ຽວກັບ ການເຫັນດີອະນຸຍາດດຳເນີນທຸລະກິດຖ່ານຂາວ ຄວນຈະກວດເບິ່ງຄືນຄວາມສາມາດຕອບສະ ໜອງທາງດ້ານແຫຼ່ງວັດຖຸດິບ, ກວດຄືນບັນ ດາໂຮງງານທີ່ມີຢູ່ແລ້ວເປັນແນວໃດ ຄວນຈະມີການກຳນົດມາດຕະຖານໃຫ້ບັນດາໂຮງງານ ແລະ ຄວນຈະເຫັນດີອະນຸຍາດໃຫ້ສ້າງຕັ້ງໂຮງງານໃໝ່ເພີ່ມອີກ ຫຼື ບໍ ເພື່ອຮັບປະກັນໃຫ້ຜູ້ດຳເນີນທຸລະກິດຖ່ານຂາວເຄື່ອນໄຫວສະດວກ ແລະ ຍືນຍົງ. | ບໍ່ໄດ້ມີການມາຂຶ້ນທະບຽນຫຼາຍກວ່າ. ດັ່ງນັ້ນ ເຫັນວ່າໜ້າຈະ**<u>ເປັນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ກວດກາ (ກົມການຄ້າພາຍໃນ)</u>** ໃນການລົງກວດກາເບິ່ງບັນດາການດຳເນີນທຸລະກິດທີ່ຜິດກົດໝາຍ ໂດຍບໍ່ມີການຂຶ້ນທະບຽນ.<br>- ປະສານຫາກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ໄດ້ຮັບຄາສະ ເໜີວ່າໃຫ້ກົມນຳເຂົ້າ - ສົ່ງອອກ ເຮັດໜັງສືໄປຫາຂະແໜງໃນແຕ່ລະແຂວງເລີຍເພື່ອບໍ່ເປັນການປະ ສານງານຫຼາຍຕໍ່. ແຕ່ໃນຄວາມເປັນຈິງແລ້ວບໍ່ແມ່ນຄວາມຮັບ ຜິດຊອບຂອງກົມນຳເຂົ້າ - ສົ່ງ ອອກ, ເພາະຈະເປັນການຄັດກັບການຈັດຕັ້ງປະຕິບັດສາຍງານຂອງໃຜມັນ. | | |
| 5 | **<u>ຄວາມຫຍຸ້ງຍາກໃນການຂໍອະນຸຍາດນຳເຂົ້າຢາເນື່ອງຈາກການຈັດຕັ້ງປະຕິບັດ ຄາສັ່ງຂອງ</u>** | ເປັນການສ້າງສິ່ງກີດຂວາງໃຫ້ແກ່ການຄ້າ ເນື່ອງຈາກວ່າເຮັດໃຫ້ | ປັບປຸງຂັ້ນຕອນ ແລະ ເວລາໃນການດຳ ເນີນເອກະສານໃຫ້ມີຄວາມແທດເໝາະ ແລະ ເ | | ກະກຽມຂໍ້ມູນ ແລະ ສຶກສາຄວາມເປັນໄປໄດ້ເພື່ອສະເໜີທາງອອກໃຫ້ | ກະຊວງສາທາລະນະສຸກ. | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ<br>ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | **<u>ລັດຖະມົນຕີວ່າການກະຊວງສາທາລະນະສຸກ ເລກທີ 2284/ສທ,</u>** ລົງວັນທີ 28 ພະຈິກ 2013 ວ່າດ້ວຍ**<u>ການປັບປຸງການໄຫຼວຽນເອກະສານຂອງກົມອາຫານ ແລະ ຢາ ໃຫ້ຜ່ານປະຕູດຽວຂອງກະຊວງ ແລະ ການຄວບຄຸມຢາເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ແລະ ສານເຄມີຕົ້ນ.</u>**<br>ໃນໄລຍະຜ່ານມາ ,ການຂໍຈົດທະບຽນ ,ການຂໍອະນຸຍາດນຳເຂົ້າ,ສົ່ງອອກ,ການຊື້-ຂາຍ,ຈຳໜ່າຍ ,ຄອບຄອງ,ເກັບຮັກສາ,ຂົນສົ່ງ,ນຳຜ່ານ,ຜະລິດ, ປຸງແຕ່ງ ຫຼື ນຳໃຊ້ ທີ່ຕິດພັນກັບສານເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ແລະ ສານເຄມີຕົ້ນ ແມ່ນຕ້ອງໄດ້ຜ່ານການສຶກສາຄົ້ນຄວ້າ ແລະ ພິຈາລະນາອອກອະນຸມັດ ຈາກກົມອາຫານ ແລະ ຢາໂດຍອີງຕາມລະບຽບຫຼັກການ ແລະ ຂໍ້ຕົກລົງຂອງກະຊວງສາທາລະນະສຸກສະບັບເລກທີ 487/ກຊສ, ລົງວັນທີ 26 ເດືອນມີນາ 2010 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອາຫານ ແລະ ຢາ. ແຕ່ມາໃນໄລຍະທ້າຍປີ 2013, ກະຊວສາທາລະນະສຸກ ໄດ້ອອກຄາສັ່ງສະບັບເລກທີ 2284/ສທ ວ່າດ້ວຍການປັບປຸງການໄຫຼວຽນເອກະສານຂອງກົມອາຫານ ແລະ ຢາ ໃຫ້ຜ່ານປະຕູດຽວຂອງກະຊວງ ແລະ ການຄວບຄຸມຢາເສບຕິດ,ວັດຖຸອອກລິດຕໍ່ຈິດປະສາດ ແລະ ສານເຄມີຕົ້ນ ແມ່ນຕ້ອງໄດ້ຮັບການອະນຸ ມັດຈາກລັດຖະມົນຕີວ່າການກະຊວງສາທາລະນະສຸກເທົ່ານັ້ນ ເຊິ່ງພາຍຫຼັງໄດ້ມີການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ໄດ້ເຮັດໃຫ້ບັນດາບໍລິສັດທີ່ດາເນີນທຸລະກິດທີ່ຕິດພັນກັບອາຫານ ແລະ ຢາ ພົບຄວາມຫຍຸ້ງຍາກໃນການຂໍອະນຸຍາດນຳເຂົ້າ ຫຼາຍກວ່າທີ່ຜ່ານມາ ເນື່ອງຈາກທຸກໆເອກະສານທີ່ເຂົ້າມາໃນກົມອາຫານ ແລະ ຢາຕ້ອງໄດ້ໄປຜ່ານລະບົບປະຕູດຽວຂອງກະຊວງສາທາລະນະສຸກ (ຕ້ອງໄດ້ໄປຜ່ານຫ້ອງການກະຊວງສາທາລະນະສຸກ ແລະ ຂັ້ນ | ຂັ້ນຕອນໃນການດຳເນີນເອກະສານມີຫຼາຍຂຶ້ນ, ກັບໄປກັບມາ ແລະ ເສຍເວລາຫຼາຍກວ່າເກົ່າ ເພາະມີຫຼາຍຂອດ ແລະ ຜ່ານຫຼາຍພາກສ່ວນພາຍໃນກະຊວງສາທາລະນະສຸກເອງ. ຊຶ່ງສົ່ງຜົນກະທົບໃນຫຼາຍດ້ານ ດັ່ງລາຍລະອຽດ ລຸ່ມນີ້:<br>- ຄ່າໃຊ້ຈ່າຍເພີ່ມຂຶ້ນ ເຊັ່ນ: ຄ່າຝາກສາງ, ຄ່າປັບໃໝ ເນື່ອງຈາກສົ່ງສິນຄ້າບໍ່ທັນຕາມກຳນົດເວລາໃນສັນຍາ ເຮັດໃຫ້ຕົ້ນທຶນເພີ້ມຂຶ້ນ (ກຳໄລຫຼຸດລົງ ແຕ່ລາຄາຍັງຕ້ອງຮັກສາໄວ້ຄືເກົ່າ ເພາະຕ້ອງຮັກສາລູກຄ້າ).<br>- ຢາເຊື່ອມຄຸນະພາບ: ຢາບາງປະເພດຈຳເປັນຕ້ອງໄດ້ເກັບຮັກສາໄວ້ໃນອຸນະພູມທີ່ເໝາະສົມ ແຕ່ລະບົບສາງຂອງ ສປປ ລາວ ຍັງບໍ່ທັນສາມາດສະໜອງລະບົບສາງດັ່ງກ່າວໄດ້ ເຮັດໃຫ້ຕ້ອງໄດ້ເກັບໄວ້ໃນສາງທີ່ມີອຸນະພູມບໍ່ເໝາະສົມ ເຊັ່ນ: ອຸນະພູມທີ່ຮ້ອນ ເຮັດໃຫ້ຢາເກີດການເຊື່ອມຄຸນນະພາບ, ໃຊ້ການບໍ່ໄດ້ ແລະ ເປື່ອຍ ເປັນຕົ້ນ.<br>- ຂະບວນການຜະລິດ ແລະ ການບັນຈຸ ຊັກຊ້າ ເນື່ອງຈາກຕ້ອງໄດ້ລໍຖ້າການອະນຸຍາດນຳເຂົ້າວັດຖຸດິບ ແລະ ອຸປະກອນ ເຮັດໃຫ້ | ໝາະສົມກວ່າປະຈຸບັນ ເຊັ່ນ ເຮັດໃຫ້ຂັ້ນຕອນສັ້ນກວ່າເກົາ | | ແກ່ກອງເລຂາ ອຄ ໄດ້ມີຄາເຫັນເພື່ອດຳເນີນການຕໍ່ໄປ. | ກອງເລຂາ ອຄ. | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ<br>ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | ລັດຖະມົນຕີວ່າການ) .ເຊິ່ງຜ່ານການປະສານງານທາງໂທລະສັບກັບບັນດາບໍລິສັດ ສາມາດສະຫຼຸບໄດ້ວ່າ :ໃນເມື່ອກ່ອນການອອກອະນຸຍາດນຳເຂົ້າຜະລິດຕະພັນຈະໃຊ້ເວລາປະມານ 02 – 03 ວັນ ແຕ່ປະຈຸບັນ ແມ່ນໃຊ້ເວລາຢ່າງໜ້ອຍ 03 ອາທິດ. | ຜະລິດຢາບໍ່ທັນຕາມແຜນການຜະລິດ ແລະ ຄວາມຕ້ອງການຂອງລູກຄ້າ.<br>- ໃນກໍລະນີສິນຄ້າເປັນປະເພດອຸປະກອນທາງດ້ານການແພດ, ບໍລິສັດບໍ່ສາມາດກຳນົດເວລາໃນການຕິດຕັ້ງອຸປະກອນໃຫ້ກັບລູກຄ້າໄດ້ຢ່າງຖືກຕ້ອງ ເພາະບໍ່ສາມາດກຳນົດເວລາທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າອຸປະກອນໄດ້.<br>- ປະເພດການຂໍອອກອະນຸຍາດນຳເຂົ້າປະເພດອື່ນໆ ເຊັ່ນ: ອາຫານ ກໍ່ໄດ້ຮັບຜົນກະທົບຈາກການປະຕິບັດການອອກອະນຸຍາດໃນຮູບແບບດັ່ງກ່າວເຊັ່ນກັນ. | | | | | |
| 6 | **<u>ການຜູກຂາດສຳປະທານການບໍລິການແຈ້ງເອກະສານພາສີຂອງບໍລິສັດ BIVAC.</u>**<br>ສະມາຄົມ ຜູ້ຈັດສົ່ງສິນຄ້າ ລະຫວ່າງປະເທດຂອງລາວ ບໍ່ເຫັນດີຕາມຂໍ້ຕົກລົງຂອງລັດຖະບານທີ່ມອບໝາຍໃຫ້ບໍລິສັດ <u>BIVAC</u> ຜູກຂາດສຳປະທານການບໍລິການແຈ້ງພາສີ ຢູ່ ສປປ ລາວ. | - ເພີ່ມຕົ້ນທຶນ.<br>- ຈຳກັດການແຂ່ງຂັນທາງທຸລະກິດ ເນື່ອງຈາກຕ້ອງໄດ້ໄປຜ່ານບໍລິສັດດຽວ.<br>- ກີດຂວາງການແຂ່ງຂັນຂອງພາກເອກະຊົນຢູ່ ສປປ ລາວ.<br>- ກີດນ່ວງການເຕີບໂຕຂອງທຸລະກິດຢ່າງຫຼີກລ້ຽງບໍ່ໄດ້. | ບັນຫາທີ່ພາກທຸລະກິດເປັນຫ່ວງກ່ຽວກັບການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ມີຄວາມແຕກຕ່າງກັນ ໃນແຕ່ລະໄລຍະຄື:<br>ໃນປີ 2012, ສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດຂອງລາວ ໄດ້ມີຄວາມເປັນຫ່ວງ ກ່ຽວກັບຮູບແບບ ແລະ ຜົນກະທົບຂອງສັນຍາສຳປະທານ ເຊິ່ງໄດ້ເຮັດໜັງສືເພື່ອຄັດຄ້ານຂໍ້ຕົກລົງຂອງລັດຖະບານທີ່ມອບໝາຍໃຫ້ບໍລິສັດບິວໂຣເວີຣິຕັສ ສຳປະທານການບໍລິການແຈ້ງພາສີ ຢູ່ ສປປ ລາວ ໃນໃບສະເໜີ ເລກທີ 610 ລົງວັນທີ 11 ຕຸລາ 2012. | - ສັນຍາສຳປະທານເພື່ອພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ພາຍໃຕ້ຮູບແບບການຮ່ວມທຶນ ລະຫວ່າງ ລັດຖະບານລາວ ແລະ ບໍລິສັດບິວໂຣເວີຣິຕັສ ສາມາດຫຼຸດຜ່ອນຕົ້ນທຶນຂອງພາກທຸລະກິດໃນການຂໍອະນຸຍາດນຳເຂົ້າ-ສົ່ງອອກ ໄດ້ປະມານ $248.527.448 ໃນໄລຍະເວລາ 10 ປີຂອງການສຳປະທານ.<br>- ພ້ອມນັ້ນ, ພາກທຸລະກິດໄດ້ຮັບຮູ້ ແລະ ເຂົ້າໃຈ ຄວາມສາຄັນຂອງການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ຢູ່ ສປປ ລາວ.<br>- ສະນັ້ນ, ທັງພາກລັດ ແລະ ພາກທຸລະກິດຄວນປະສານງານກັນຫຼາຍຂຶ້ນ ເພື່ອ | - ກຂອຄ ໄດ້ສຳເລັດບົດຄົ້ນຄວ້າກ່ຽວກັບການສຳປະທານແຈ້ງພາສີປະຕູດຽວຂອງບໍລິສັດ BIVAC ໃນວັນທີ 5 ມັງກອນ 2015. ບົດຄົ້ນຄວ້າດັ່ງກ່າວ ໄດ້ລົງຢູ່ໃນ ສູນຂໍ້ມູນຂ່າວສານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ.<br>- ສະພາການຄ້າ ແລະ ອຸດສາຫະກາແຫ່ງຊາດລາວ ໄດ້ຈັດກອງປະຊຸມ-ສຳມະນາ ກ່ຽວກັບການແຈ້ງພາສີປະຕູດຽວແຫ່ງຊາດ ເພື່ອລະດົມແນວຄວາມຄິດຈາກພາກ | - ກົມພາສີ, ກະຊວງການເງິນ.<br>- ກອງເລຂາ ອຄ, ກະຊວງອຸດສາຫະກຳ ແລະ ການຄ້າ. | ຖືກແກ້ໄຂແລ້ວ |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | | | ໃນປີ 2014, ໂດຍລວມແລ້ວ ພາກທຸລະກິດໄດ້ຮັບຮູ້ ແລະ ເຂົ້າໃຈ ຄວາມສາຄັນຂອງການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ ແຕ່ຍັງມີຄວາມເປັນຫ່ວງ ກ່ຽວກັບຄວາມເປັນເອກະພາບໃນການຈັດຕັ້ງປະຕິດບັດຂອງພາກສ່ວນກ່ຽວຂ້ອງຂອງລັດ (ອີງຕາມບົດລາຍງານກອງປະຊຸມ-ສາມະນາ ແລະ ການປະກອບຄາເຫັນກ່ຽວກັບການແຈ້ງພາສີປະຕູດຽວແຫ່ງຊາດ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເລກທີ 0023/ສຄອ ລົງວັນທີ 13 ມັງກອນ 2015). | ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດໃຫ້ສໍາເລັດໃນທ້າຍປີ 2015 ແລະ ສາມາດເປີດໃຫ້ບໍລິການລະບົບດັ່ງກ່າວໄດ້ ໃນຕົ້ນປີ 2016. | ທຸລະກິດ ໃນວັນທີ 13 ມັງກອນ 2015.<br>- ໂດຍອີງຕາມບົດຄົ້ນຄວ້າຂອງ ກຂອຄ ແລະ ບົດລາຍງານກອງປະຊຸມ-ສໍາມະນາ ແລະ ການປະກອບຄໍາເຫັນກ່ຽວກັບການແຈ້ງພາສີປະຕູດຽວແຫ່ງຊາດ ຂອງສະພາການຄ້າ ແລະ ອຸດສາຫະກາແຫ່ງຊາດລາວ ເລກທີ 0023/ສຄອ, ກຂອຄ ໄດ້ຮ່າງບົດລາຍງານ ກ່ຽວກັບ ການສໍາປະທານບໍລິການແຈ້ງເອກະສານພາສີຜ່ານປະຕູດຽວຂອງບໍລິສັດບົວໂຮເວີຣິຕັສ ເຖິງ ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ ແລະ ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງຮັບຊາບ ໃນວັນທີ 20 ມັງກອນ 2015. | | |
| 7 | **<u>ການຂົນສົ່ງສິນຄ້າຜ່ານແດນຈາກປະເທດມາເລເຊຍຜ່ານໄທ ເຂົ້າມາລາວ ແລະ ຈາກລາວ ຜ່ານໄທ ໄປມາເລເຊຍ (ຜ່ານດ່ານສະເດົາຂອງໄທ).</u>**<br>ການຂົນສົ່ງສິນຄ້າຜ່ານແດນທາງດ່ານສະເດົາຈະຕ້ອງຍື່ນຄໍາຮ້ອງຂໍສົ່ງສິນຄ້າຜ່ານແດນຕໍ່ດ່ານພາສີສະເດົາເພື່ອດໍາເນີນການສະເໜີຫາກົມພາສີພິຈາລະນາອະນຸມັດເປັນແຕ່ລະກໍລະນີ ເນື່ອງຈາກດ່ານສະເດົາບໍ່ແມ່ນທ່າ ຫຼື ສຸຖານທີ່ສໍາລັບນໍາເຂົ້າ, ຜ່ານເຂົາ້ ແລະ ຜ່ານອອກສິນຄ້າຜ່ານແດນຕາມທີ່ກໍານົດໄວ້ໃນລະບຽບປະຕິບັດຂອງພາສີ ພສ 2554 ຂໍ້ 4 06 02 05. | - ພາກທຸລະກິດທີ່ກ່ຽວຂ້ອງຂອງລາວ ແລະ ໄທ ປະສົບກັບຄວາມຫຍຸ້ງຍາກໃນການຂົນສົ່ງ.<br>- ເສຍເວລາ.<br>- ເສຍຄ່າໃຊ້ຈ່າຍເພີ່ມຂຶ້ນ. | ສະເໜີປະຕິບັດຕາມຂັ້ນຕອນ ແລະ ວິທີປະຕິບັດເອກະພາບຄືກັບການປະຕິບັດຕໍ່ກໍາປູເຈຍ ແລະ ມຽນມາ ເຊິ່ງບໍ່ໄດ້ມີການຂໍອະນຸຍາດຜ່ານຄືກັບສິນຄ້າທີ່ຕ້ອງຜ່ານມາຍັງ ສປປ ລາວ. | | - ກອງເລຂາຄະນະກໍາມະນການຂົນສົ່ງແຫ່ງຊາດລະບຸວ່າ: ຕ້ອງໄດ້ມີການນໍາສະເໜີຢູ່ໃນກອງປະຊຸມ 2 ຝ່າຍ (ລາວ - ໄທ) ໃນປີໜ້າ ເນື່ອງຈາກປີນີ້ໄດ້ຈັດເປັນທີ່ຮຽບຮ້ອຍແລ້ວ. ແລະ ຈະນາບັນຫານີເຂົ້າປຶກສາຫາລືໃນກອງປະຊຸມກອງເລຂາຄະນະກໍາມະນການຂົນສົ່ງແຫ່ງຊາດທີ່ຈະຈັດຂຶ້ນໃນໄວໆນີ້.<br>- 03/12/2014 ໄດ້ປະສານຫາເລຂາ ລມຕຊ ຕື່ມ ແຕ່ຍັງບໍ່ທັນມີຄວາມຄືບໜ້າ. ດັ່ງນັ້ນ ຈຶ່ງໄດ້ຮ່າງບົດລາຍງານ ກ່ຽວກັບ ຄວາມຄືບໜ້າບັນຫາການຂົນສົ່ງສິນຄ້າຜ່ານ | - ກອງເລຂາ ອຄ.<br>- ກະຊວງໂຍທາທິການ ແລະ ຂົນສົ່ງ.<br>- ກອງເລຂາຄະນະກໍາມະການຂົນສົ່ງແຫ່ງຊາດ. | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | | | | | ແດນທາງດ່ານສະເດົາ ຫາທ່ານ ລມຕຊ (ທ່ານ ສຽວ) ເພື່ອຂໍທິດ. | | |
| 8 | **<u>ການເກັບຄ່າທຳນຽມລົດບັນທຸກຜ່ານດ່ານຈາລໍ, ກວາງບິນ, ຫວຽດນາມ:</u>**<br>ຄະນະກຳມະການປົກຄອງປະຊາຊົນແຂວງກວາງບິ່ງ ສສ ຫວຽດນາມ ໄດ້ອອກຂໍ້ຕົກລົງ ກ່ຽວກັບການເກັບຄ່າທຳນຽມຕໍ່ພາຫະນະຂົນສົ່ງຜ່ານແດນ ຕາມຂໍ້ຕົກລົງເລກທີ 2359/QD-UBND ລົງວັນທີ 27 ມີນາ 2013. ຄ່າທຳນຽມ ມີມູນຄ່າ ລະຫວ່າງ 50.000-1.200.000 ດົງ/ຄັນ/ຖ້ຽວ ($3-$55) ເຊິ່ງ ສູງກວ່າການເກັບຄ່າທຳນຽມຢູ່ດ່ານສາກົນຂອງ ສປປ ລາວ ($20/ຄັນ/ຖ້ຽວ). | - ເພີ່ມຕົ້ນທຶນໃຫ້ແກ່ພາກທຸລະກິດຂົນສົ່ງຜ່ານແດນຂອງ ສປປ ລາວ ທີ່ດຳເນີນການຂົນສົ່ງສິນຄ້າຜ່ານແດນ ສສ ຫວຽດນາມ. | - ສະເໜີໃຫ້ຝ່າຍ ສສ ຫວຽດນາມ ຫຼຸດການເກັບຄ່າທຳນຽມລົດບັນທຸກ ໃຫ້ເທົ່າທຽມກັບ ສປປ ລາວ. | ພະແນກໂຍທາທິການ ແລ ຂົນສົ່ງ ຂອງແຂວງຄຳມ່ວນ ໄດ້ດາເນີນມາດຕະການຕອບໂຕ້ ໂດຍຍົກຄ່າທຳນຽມຂອງ ສປປ ລາວ ຂຶ້ນເທົ່າທຽມກັບຝ່າຍ ສສ ຫວຽດນາມ ໃນເວລາທີ່ລົດບັນທຸກຂອງ ສສ ຫວຽດນາມຜ່ານເຂົ້າມາທຸກຄັ້ງ. | ພະແນກໂຍທາທິການ ແລະ ຂົນສົ່ງຂອງແຂວງຄຳມ່ວນ ໄດ້ອອກຂໍ້ຕົກລົງກ່ຽວກັບ ການເກັບຄ່າທານຽມສຳລັບລົດບັນທຸກຂອງ ສສ ຫວຽດນາມ ເຊິ່ງມີມູນຄ່າເທົ່າທຽມກັບ ຄ່າທຳນຽມທີ່ ສສ ຫວຽດນາມ ເກັບສຳລັບລົດບັນທຸກຂອງ ສປປ ລາວ. | - ກອງເລຂາ ອຄ.<br>- ກະຊວງໂຍທາທິການ ແລະ ຂົນສົ່ງ. | ຖືກແກ້ໄຂແລ້ວ |
| 9 | **<u>ຜົນກະທົບຂອງການຜູກຂາດ ຂອງບໍລິສັດ ແອວເອັສ ໃນການບໍລິການເອກະ ສານປະກອບການສົ່ງອອກ ໝາກໂມ ແລະ ໝາກກ້ວຍ ໄປ ສປ ຈີນ ຕໍ່ຜູ້ປະກອບການ ພາຍໃນແຂວງອຸດົມໄຊ</u>**<br><br>ພາກທຸລະກິດ ຢູ່ ພາຍໃນແຂວງອຸດົມໄຊ ບໍ່ເຫັນດີຕໍ່ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງໆ ອຸດົມໄຊ ວ່າດ້ວຍ ການມອບໃຫ້ ບໍລິສັດ ແອວເອັສ ການຄ້າ ຂາອອກ - ຂາເຂົ້າ ຮັບເໝົາສົ່ງສິນຄ້າປະເພດໝາກໂມ ແລະ ໝາກກ້ວຍ ທີ່ປູກຢູ່ພາຍໃນແຂວງອຸດົມໄຊ ອອກໄປ ສປ ຈີນ, ເລກທີ 1088/ຈຂ.ອຊ, ລົງວັນທີ 14 ຕຸລາ 2014. | ບົດຄົ້ນຄວ້າຂັ້ນເບື້ອງຕົ້ນຂອງ ກຂອຄ ໄດ້ສະແດງໃຫ້ເຫັນວ່າ:<br>- ພາກທຸລະກິດ ໄດ້ສະເໜີຄັດຄ້ານການຜູກຂາດຂອງ ບໍລິສັດ ແອວເອັສ ຍ້ອນ 03 ສາເຫດຄື: ການຜູກຂາດ, ການສູນເສຍກຳໄລຂອງບໍລິສັດຂົນສົ່ງຂອງລາວ ຢູ່ແຂວງອຸດົມໄຊ, ແລະ ຄວາມບໍ່ໂປ່ງໃສ ໃນການດຳເນີນທຸລະກິດຂອງບໍລິສັດແອວເອັສ.<br>- ການຜູກຂາດຂອງບໍລິສັດແອວເອັສ ເພື່ອເກັບຄ່າບໍລິການໃນການປະກອບເອກະສານ ການສົ່ງອອກໝາກໂມ ແລະ ໝາກກ້ວຍ ຈາກແຂວງອຸດົມໄຊ ໄປ ສປ ຈີນ ຈະເພີ່ມຕົ້ນທຶນໃຫ້ແກ່ພາກທຸລະກິດ ປະມານ 2.960 ລ້ານກີບ ໃນໄລຍະເວລາ 01 ປີ ຂອງການຜູກຂາດ. ການເພີ່ມ | ສະເໜີໃຫ້ຂະແໜງການລັດທີ່ກ່ຽວກວດກາຄືນ ວິທີການຈັດຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ ຢູ່ ດ່ານສາກົນບໍ່ເຕັນ. | ເນື່ອງຈາກການຜູກຂາດ ຂອງບໍລິສັດ ແອວເອັສ ໄດ້ສົ່ງຜົນກະທົບທັງທາງກົງ (ເພີ່ມຕົ້ນທຶນໃຫ້ແກ່ພາກທຸລະກິດ) ແລະ ທາງອ້ອມ (ຈາກັດການຂະຫຍາຍຕົວຂອງຜູ້ປະ ກອບການພາຍໃນ)ຕໍ່ພາກທຸລະກິດ, ຂະແໜງ ການຂອງລັດທີ່ກ່ຽວຂ້ອງ ຄວນຊອກຫາວິທີການຫຼຸດຜ່ອນຜົນກະທົບດັ່ງກ່າວ ໂດຍອາດພິຈາລະນາທາງເລືອກດັ່ງນີ້:<br>• ທາງເລືອກທີ 1: ສືບຕໍ່ການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງໆ ອຸດົມໄຊ<br>- ຄວນມີລະບຽບການບັງຄັບ ຕໍ່ບໍລິສັດແອວເອັສ ໃນການອອກໃບບິນຮັບເງິນຢ່າງຖືກ ຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ເພື່ອສະດວກໃນການຕິດຕາມ - ກວດກາ ແລະ ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງໆ ອຸດົມໄຊ.<br>- ຄວນຫຼຸດຈຳນວນຖ້ຽວຂອງການຜູກຂາດບໍລິການເອກະສານການສົ່ງອອກ ຈາກ | - ກຂອຄ ໄດ້ສຳເລັດຮ່າງບົດຄົ້ນຄວ້າ ກ່ຽວກັບຜົນກະທົບຂອງການຜູກຂາດ ຂອງບໍລິສັດ ແອວເອັສ ໃນການບໍລິການເອກະ ສານປະກອບການສົ່ງອອກ ໝາກໂມ ແລະ ໝາກກ້ວຍ ໄປ ສປ ຈີນ ຕໍ່ຜູ້ປະກອບການ ພາຍໃນແຂວງອຸດົມໄຊ.<br>- ໂດຍອີງຕາມບົດຄົ້ນຄວ້າຂອງ ກຂອຄ, ກຂອຄ ໄດ້ເຮັດບົດລາຍງານບັນຫາດັ່ງກ່າວ ເຖິງ ທ່ານ ລັດຖະມົນຕີວ່າການ ກະຊວງ ອຄ.<br>- ພາຍໃຕ້ທິດຊີ້ນຳຂອງທ່ານ ລັດຖະມົນຕີວ່າການ, ກຂອຄ ກຳລັງກະກຽມ ກອງປະຊຸມປຶກສາຫາລືລະຫວ່າງ ພາກລັດທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ຢູ່ແຂວງອຸດົມໄຊ ເພື່ອປະເມີນຄວາມເປັນໄປໄດ້ຂອງທາງເລືອກໃນການຫຼຸດຜ່ອນຜົນກະທົບຂອງການຜູກຂາດ. | - ກອງເລຂາ ອຄ | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | | ຂຶ້ນຂອງຄ່າບໍລິການເອກະສານ ໄດ້ຫຼຸດຄວາມສາມາດແຂ່ງຂັນ ຂອງພາກທຸລະກິດພາຍໃນ ເຊິ່ງ ໃນໄລຍະຍາວ ຈະເຮັດໃຫ້ຜູ້ປະ ກອບການຢຸດດຳເນີນທຸລະກິດ ການຜະລິດກະສິກຳ ເພື່ອສົ່ງ ອອກເປັນສິນຄ້າ.<br>- ຖ້າພິຈາລະນາ ທັງບັນຫາຂອງ ການເສຍຄ່າບໍລິການເອກະສານ ສູງ ແລະ ຄວາມບໍ່ໂປ່ງໃສ ໃນ ການດຳເນີນທຸລະກິດຂອງ ບໍລິສັດ ແອວເອັສ (ບໍ່ມີໃບບິນ ຮັບເງິນ ແລະ ບາງກໍລະນີ ເກັບ ຄ່າບໍລິການເອກະສານປະກອບ ການສົ່ງອອກສິນຄ້າກະສິກຳປະ ເພດອື່ນ ທີ່ບໍ່ຢູ່ໃນຂໍ້ຕົກລົງຂອງ ເຈົ້າແຂວງອຸດົມໄຊ), ພາກທຸ ລະກິດ ຢູ່ແຂວງອຸດົມໄຊ ຍິ່ງຈະ ເສຍຄວາມສາມາດແຂ່ງຂັນໃນ ການດຳເນີນທຸລະກິດການຂົນ ສົ່ງສິນຄ້າ ແລະ ຂາດຄວາມໄວ້ ວາງໃຈຕໍ່ພາກລັດ ໃນການ ຈັດ ຕັ້ງປະຕິບັດຂໍ້ຕົກລົງດັ່ງກ່າວ. | | 8.000 ຖ້ຽວ/ປີ ມາເປັນ 3.000 ຖ້ຽວ/ ປີ. ອີງຕາມຜົນຂອງການຄົ້ນຄວ້າ, ບໍລິສັດ ແອວເອັສ ຈະມີກຳໄລປະມານ 270.000.000 ກີບ ໃນກໍລະນີທີ່ມີການ ຜູກຂາດ ຈຳນວນ 3.000 ຖ້ຽວ/ປີ. ມູນ ຄ່າດັ່ງກ່າວ ອາດຈະພຽງພໍຕໍ່ຄ່າເສຍ ໂອກາດຂອງເງິນທີ່ທາງບໍລິສັດ ໄດ້ຈ່າຍ ພັນທະລ່ວງໜ້າ (2.400 ລ້ານກີບ) ໃຫ້ ແຂວງ ອຸດົມໄຊ.<br>- ມອບລາຍຮັບທີ່ເກັບຈາກອາກອນຄ່າເຊົ່າ ທີ່ດິນ ຄືນໃຫ້ແກ່ພາກທຸລະກິດຕາມ ຈຳນວນຖ້ຽວທີ່ມີການຜູກຂາດ (3.000 ຖ້ຽວ/ປີ).<br>• ທາງເລືອກທີ 2: ຢຸດການຈັດຕັ້ງປະຕິບັດຂໍ້ ຕົກລົງຂອງເຈົ້າແຂວງ ອຸດົມໄຊ<br>- ຄວນລະດົມທຶນຈາກບັນດາບໍລິສັດພາຍ ໃນແຂວງອຸດົມໄຊ ເພື່ອຈ່າຍພັນທະຄືນ ໃຫ້ແກ່ ບໍລິສັດ ແອວເອັສ.<br>- ປະສານສົມທົບກັບພາກທຸລະກິດ ເພື່ອ ຊອກຫາກົນໄກການຈັດເກັບລາຍຮັບ ເຂົ້າ ງົບປະມານຂອງລັດ ຢ່າງມີປະ ສິດທິພາບ. | | | |
| 10 | **ການສົ່ງອອກກ້ວຍຫອມຂອງ ບໍລິສັດໄຫສິນ ພັດທະນາການກະເສດ ຈາກ ສປປ ລາວ ໄປ ສປ ຈີນ ຜ່ານແດນຂອງ ສສ ຫວຽດນາມ**<br>ບໍລິສັດໄຫສິນພັດທະນາການກະເສດ ຂອງ ສປປ ລາວ ບໍ່ສາມາດເຄື່ອນຍ້າຍກ້ວຍຫອມ ຜ່ານແດນ ຂອງ ສສ ຫວຽດນາມ ໄປ ສປ ຈີນ ໃນວັນທີ 7-15 ເມສາ 2015 ຍ້ອນວ່າ ໃນໄລຍະຜ່ານມາ ການ ສົ່ງອອກກ້ວຍຫອມຈາກ ສປປ ລາວ ໄປ ສປ ຈີນ ບໍ່ເຄີຍຜ່ານແດນຂອງ ສສ ຫວຽດນາມຈັກເທື່ອ. | - ເພີ່ມຕົ້ນທຶນທາງດ້ານການຄ້າ ແກ່ພາກທຸລະກິດ | - ດ່ານຂອງ ສສ ຫວຽດນາມ ໄດ້ສະເໜີໃຫ້ ລັດຖະບານ ແຫ່ງ ສປປ ລາວ ແຈ້ງໃຫ້ ລັດຖະບານ ແຫ່ງ ສສ ຫວຽດນາມ ຮັບ ຊາບ ກ່ອນການນຳສິນຄ້າຜ່ານແດນ.<br>- ທາງເລືອກອື່ນໃນການຜ່ານແດນ ສສ ຫວຽດນາມ ແມ່ນໃຫ້ບໍລິສັດເອກະຊົນ ຂອງ ສສ ຫວຽດນາມ ເປັນຜູ້ຂົນສົ່ງ ສິນຄ້າ ຈາກ ສສ ຫວຽດນາມ ໄປ ສປ ຈີນ. ໃນກໍລະນີນີ້, ຜູ້ສົ່ງອອກ ຂອງ ສປປ ລາວ ຕ້ອງປ່ຽນເອກະສານສົ່ງອອກ ໄປ | ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮ່າງ ໜັງສືແຈ້ງ ເຖິງ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສສ ຫວຽດນາມ ເພື່ອຮັບຊາບ ບັນຫາ ແລະ ອຳນວຍຄວາມສະດວກທາງ ດ້ານການຄ້າ ແກ່ຜູ້ສົ່ງອອກຂອງ ສປປ ລາວ ຕາມສັນຍາວ່າດ້ວຍ ສິນຄ້າຜ່ານແດນ ທີ່ 02 ລັດຖະບານ ໄດ້ລົງນາມໃນວັນທີ 13 ມີນາ 2009. | ກຂອຄ ກຳລັງຕິດຕາມຄວາມຄືບ ໜ້າ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສສ ຫວຽດ ນາມ ເຊິ່ງກຳລັງດຳເນີນການປະ ສານສົມທົບກັບພາກສ່ວນກ່ຽວ ຂ້ອງປະຈຳດ່ານ ສສ ຫວຽດ ນາມ. | - ກອງເລຂາ ອຄ | |

| ລ/ດ | ເນື້ອໃນຂອງບັນຫາ | ຜົນກະທົບ | ຂໍ້ສະເໜີ | ການແກ້ໄຂ | ຄວາມຄືບໜ້າ | ພາກສ່ວນ ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|
| | | | ສປ ຈີນ ຈາກ ຟອມ E (ຮູບການສົ່ງອອກໄປ ສປ ຈີນ) ມາເປັນ ຟອມ S (ຮູບການສົ່ງອອກໄປ ສສ ຫວຽດນາມ) ແລະ ມອບໃຫ້ບໍລິສັດຂອງ ສສ ຫວຽດນາມ ເປັນຕົ້ນແມ່ນ ບໍລິສັດ ASEAN HM IMPORT-EXPORT ເປັນຜູ້ຮັບຜິດຊອບໃນການຂົນສົ່ງສິນຄ້າ ຈາກ ສສ ຫວຽດນາມ ໄປ ສປ ຈີນ | | | | |